ຂໍ້ມູນສຳຫລັບພິສູດຄວາມມີສິດໄດ້ກິນອາຫານຟຣີ ຫລືໃນຣາຄາທີ່ຫລຸດໃຫ້

ສຳຫລັບຄອບຄົວທີ່ໄດ້ຮັບຟູດສະແຕມ ຫລື TANF: ຖ້າຫາກທ່ານໄດ້ຮັບຟູດສແຕມ ຫລື TANF ສຳຫລັບລູກ ຂອງທ່ານ ທ່ານຈຳເປັນສິ່ງແຕ່ເອກສານໃດນຶ່ງທີ່ສະແດງວ່າຄອບຄົວຂອງທ່ານກຳລັງໄດ້ຮັບການຊ່ວຍເຫລືອດັ່ງກ່າວຢູ່ເທົ່ານັ້ນ ໂດຍບໍ່ຈຳເປັນຕ້ອງແຈ້ງຂໍ້ມູນອື່ນໃດຕື່ມອີກ. ເອກສານທີ່ທ່ານສາມາດສົ່ງໃຫ້ເຮົາໄດ້ ມີຄື:

- ໜັງສືຢັ້ງຢືນການຊ່ວຍເຫລືອຟູດສະແຕມ ຫລື TANF ທີ່ສະແດງວັນເວລາ ຫລືໄລຍະທີ່ໄດ້ຮັບການຊ່ວຍເຫລືອດັ່ງກ່າວ
- ຈົດໝາຍຈາກຫ້ອງການຟູດສະແຕມ ຫລືຫ້ອງການປະຊາສົງເຄາະທີ່ລະບຸວ່າທ່ານໄດ້ຮັບຟູດສະແຕມ ຫລື TANF ຢູ່ເວລານີ້
- ບັດ ATP (ບັດທີ່ສະແດງວ່າທ່ານໄດ້ຮັບອະນຸຍາດໃຫ້ປະກອບສ່ວນໃນໂຄງການຊ່ວຍເຫລືອເຫລົ່ານີ້.

ຖ້າຫາກວ່າເມື່ອກ່ອນນີ້ ລູກຂອງທ່ານໄດ້ຮັບອະນຸມັດໃຫ້ກິນອາຫານຟຣີ ເນື່ອງຈາກທ່ານໄດ້ແຈ້ງໝາຍເລກການຊ່ວຍເຫລືອ ຟູດສະແຕມ ຫລື TANF ລົງໃນຟອຣ້ມຄຳຮ້ອງຂໍກິນອາຫານຟຣີຂອງລູກຂອງທ່ານ ແຕ່ວ່າດຽວນີ້ທ່ານບໍ່ໄດ້ຮັບຟູດສະແຕມ ຫລື TANF ສຳຫລັບລູກຂອງທ່ານແລ້ວ ແລະຢາກໄດ້ຮັບສິນປະໂຍດດັ່ງກ່າວຄືນໃໝ່ອີກ ທ່ານຕ້ອງ: (1) ກອກຟອຣ້ມຄຳຮ້ອງຂໍກິນອາຫານຟຣີ ພ້ອມກັບແຈ້ງລາຍໄດ້ຂອງທຸກໆຄົນຢູ່ໃນຄົວເຮືອນຂອງທ່ານ (2) ຈົດຊື່ແລະເລກສວັດດີການສັງຄົມ (Social Security Number) ຂອງ ສະມາຊິກຜູ້ໃຫຍ່ທຸກໆຄົນໃນຄອບຄົວໃສ່ໃນຟອຣ້ມນັ້ນຫລືວ່າໃສ່ເຈ້ຍໃບນຶ່ງຕ່າງຫາກ ແລະ (3) ສົ່ງສົ້ນເຊັກ ເງິນເດືອນ ຫລືເອກສານອື່ນໆທີ່ສະແດງເຖິງລາຍໄດ້ໃນປັດຈຸບັນຂອງທ່ານ

ສຳຫລັບຄອບຄົວທີ່ບໍ່ໄດ້ຮັບຟູດສະແຕມ ຫລື TANF: ຖ້າຫາກວ່າທ່ານບໍ່ໄດ້ຮັບຟູດສະແຕມ ຫລື TANF ສຳຫລັບລູກຂອງທ່ານ (1) ໃຫ້ຈົດຊື່ແລະເລກສວັດດີການສັງຄົມຂອງສະມາຊິກຜູ້ໃຫຍ່ທຸກຄົນໃນຄົວເຮືອນໃສ່ແຖວຂ້າງລຸ່ມນີ້ ແລະ (2) ໃຫ້ສົ່ງສຳເນົາຂໍ້ມູນຫລືເອກສານທີ່ສະແດງເຖິງລາຍໄດ້ປັດຈຸບັນຂອງໝົດທັງຄົວເຮືອນຂອງທ່ານ ລາຍໄດ້ປັດຈຸບັນ ແມ່ນຈຳນວນເງິນເດືອນ ທີ່ຄອບຄົວຂອງທ່ານໄດ້ຮັບໃນເດືອນແລ້ວນີ້

ຊື່ຂອງສະມາຊິກຜູ້ໃຫຍ່ໃນຄົວເຮືອນ	ເລກສວັດດີການສັງຄົມ
1._____	__/__/__/-__/__/-__/__/__/__/
2._____	__/__/__/-__/__/-__/__/__/__/
3._____	__/__/__/-__/__/-__/__/__/__/
4._____	__/__/__/-__/__/-__/__/__/__/
5._____	__/__/__/-__/__/-__/__/__/__/

ເອກສານທີ່ທ່ານສົ່ງໄປນັ້ນຕ້ອງສະແດງໃຫ້ເຫັນ: (1) ຈຳນວນລາຍໄດ້ທີ່ໄດ້ຮັບ (2) ຊື່ຂອງຜູ້ທີ່ໄດ້ຮັບລາຍໄດ້ນັ້ນ (3) ມື້ທີ່ໄດ້ຮັບລາຍໄດ້ນັ້ນ ແລະ (4) ໄດ້ຮັບລາຍໄດ້ດັ່ງກ່າວເດືອນລະຈັກເທື່ອ
ເພື່ອສແດງຈຳນວນເງິນທີ່ຄົນໃນຄົວເຮືອນຂອງທ່ານໄດ້ຮັບໃນເດືອນແລ້ວນີ້ ໃຫ້ສົ່ງສຳເນົາຂອງເອກສານຕ່າງໆທີ່ບົ່ງຢູ່ຂ້າງລຸ່ມນີ້:

- **ສຳຫລັບຜູ້ທີ່ມີລາຍໄດ້/ ຄ່າແຮງງານ/ ເງິນເດືອນ:** ໃຫ້ສົ່ງສົ້ນເຊັກເງິນເດືອນປັດຈຸບັນສຳຫລັບແຕ່ລະວຽກທີ່ບອກວ່າໄດ້ຮັບເດືອນລະຈັກເທື່ອ; ຊອງເງິນເດືອນທີ່ບອກວ່າໄດ້ຮັບເດືອນລະຈັກເທື່ອ; ຈົດໝາຍຈາກນາຍຈ້າງທີ່ບອກຈຳນວນຄ່າແຮງງານທັງໝົດ ແລະຈ່າຍເດືອນລະຈັກເທື່ອ; ໜັງສືທຸລະກິດຫລືໜັງສືເຮັດຟາຣ້ມ ເຊັ່ນປຶ້ມບັນຊີຫລືປຶ້ມຈ່າຍພາສີເປັນຕົ້ນ.

- **ສຳຫລັບຜູ້ທີ່ໄດ້ຮັບເງິນສວັດດີການສັງຄົມ / ເງິນເບັ້ຍລ້ຽງສຳຫລັບຜູ້ເຖົ້າ / ເງິນເບັ້ຍບຳນານ:** ໃຫ້ສົ່ງຈົດໝາຍທີ່ສະແດງ ວ່າໄດ້ຮັບເງິນສວັດດີການສົງຄົມ; ໜັງສືທີ່ສະແດງວ່າໄດ້ຮັບສິນປະໂຍດດັ່ງກ່າວ; ໃບແຈ້ງການອະນຸມັດເງິນເບັ້ຍລ້ຽງ